ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຄະນະສະເພາະກິດເພື່ອປ້ອງກັນ, ຄວບຄຸມ
ແລະແກ້ໄຂການລະບາດຂອງພະຍາດ COVID-19 ເລກທີ 031 /ສພກ
ນະຄອນຫຼວງວຽງຈັນ, ວັນທີ 21 /ເມສາ 2020

# ຄຳແນະນຳ
## ກ່ຽວກັບເງື່ອນໄຂ ແລະ ມາດຕະການ ສຳລັບພາກທຸລະກິດ ທີ່ສາມາດດຳເນີນກິດຈະການໃນໄລຍະທີ່ມີການລະບາດຂອງພະຍາດ COVID-19

- ອີງຕາມ ຄຳສັ່ງຂອງທ່ານນາຍົກລັດຖະມົນຕີ ສະບັບເລກທີ 06/ນຍ, ລົງວັນທີ 29 ມີນາ 2020 ວ່າດ້ວຍການເພີ່ມທະວີ ມາດຕະການສະກັດກັ້ນ, ກັນການລະບາດ, ຄວບຄຸມ ແລະ ກຽມຄວາມພ້ອມຮອບດ້ານເພື່ອຕ້ານພະຍາດ COVID-19;
- ອີງຕາມ ການແຈ້ງການຂອງຫ້ອງການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 481/ຫສນຍ, ລົງວັນທີ 15 ເມສາ 2020 ວ່າດ້ວຍການຕໍ່ເວລາ ແລະ ການແນະນຳເພີ່ມເຕີມກ່ຽວກັບການຈັດຕັ້ງປະຕິບັດຄຳສັ່ງຂອງທ່ານນາຍົກລັດຖະມົນຕີ ສະບັບເລກທີ 06/ນຍ, ລົງວັນທີ 29 ມີນາ 2020.

ເພື່ອເປັນການຫຼຸດຜ່ອນຜົນກະທົບຕໍ່ເສດຖະກິດຂອງລາວ ຈາກການຕໍ່ເວລາ ການຈັດຕັ້ງປະຕິບັດຄຳສັ່ງ ສະບັບເລກທີ 06/ນຍ ແຕ່ຕ້ອງບົນພື້ນຖານຮັບປະກັນບໍ່ໃຫ້ມີຄວາມສ່ຽງໃນການຕິດເຊື້ອພະຍາດ COVID-19,

**ຄະນະສະເພາະກິດ ເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດ COVID-19 ກຳນົດເງື່ອນໄຂ ແລະ ມາດຕະການ ດັ່ງນີ້:**

## I. ເງື່ອນໄຂທີ່ຕ້ອງປະຕິບັດສຳລັບພາກທຸລະກິດ ທີ່ຈະເປີດດຳເນີນກິດຈະການ ມີດັ່ງນີ້:

1) ມີພື້ນທີ່ເຮັດວຽກ ເປັນຂອບເຂດສະເພາະຂອງໂຄງການ, ບໍລິສັດ ແລະ ໂຮງງານ, ມີບ່ອນພັກເຊົາໃນຂອບເຂດສະເພາະ ໄດ້ມາດຕະຖານ ໃຫ້ພະນັກງານ-ກຳມະກອນ ຢ່າງພຽງພໍ ສຳລັບກິດຈະການທີ່ມີແຮງງານຫຼາຍ ຫຼື ຄວາມສ່ຽງສູງໃນການລະບາດ, ມີສະຖານທີ່ແຍກປ່ຽວສຳລັບ ກໍລະນີສົງໃສພະຍາດ COVID-19 ພ້ອມທັງຕ້ອງມີລົດ ຮັບ-ສົ່ງຄົນເຈັບໃນເວລາສຸກເສີນ;
2) ມີສະຖານທີ່ເຮັດວຽກ ທີ່ບໍ່ແອອັດ ແລະ ຮັບປະກັນໄລຍະຫ່າງ 1 ແມັດຂຶ້ນໄປ;
3) ມີທີ່ພັກຂອງພະນັກງານ-ກຳມະກອນ ທີ່ບໍ່ແອອັດ ແລະ ບ່ອນນອນຫ່າງກັນຢ່າງໜ້ອຍ 1 ແມັດຂຶ້ນໄປ;
4) ມີຫ້ອງອາຫານທີ່ບໍ່ແອອັດ, ຮັບປະກັນຫຼັກການອະນາໄມ, ບໍ່ໃຫ້ໃຊ້ເຄື່ອງຮ່ວມກັນ ແລະ ເວລານັ່ງກິນອາຫານຕ້ອງມີໄລຍະຫ່າງ 1 ແມັດຂຶ້ນໄປ;
5) ມີລົດຮັບສົ່ງພະນັກງານ ແລະ ກຳມະກອນ ໂດຍຮັບປະກັນໄລຍະຫ່າງ 1 ແມັດຂຶ້ນໄປ ຖ້າວ່າທີ່ພັກຢູ່ຫ່າງຈາກບ່ອນເຮັດວຽກ;
6) ມີນ້ຳສະອາດເພື່ອນຳໃຊ້ຢ່າງພຽງພໍຕະຫຼອດ 24 ຊົ່ວໂມງ, ມີບ່ອນລ້າງມື, ສະໜອງສະບູລ້າງມື, ເຈລລ້າງມື, ຜ້າອັດປາກ-ດັງ ໃຫ້ພຽງພໍ ສຳລັບພະນັກງານ-ກຳມະກອນ ທຸກຄົນ ໃຫ້ຖືກຕາມຫຼັກການອະນາໄມ;